# ການປ້ອງກັນໄຟໄໝ້ລາມປ່າ

## ໃນແຂວງ ຫົວພັນ

*ມີເປົ້າໝາຍໃນການປຸກຈິດສຳນຶກ ແລະ ສົ່ງເສີມຊາວບ້ານຄອບຄຸມໄຟໄໝ້ລາມປ່າ ໂດຍຕິດພັນກັບ ການນຳໃຊ້ຮອບວຽນຕາມການຈັດສັນທີ່ດິນກະສິກຳ ແລະ ປ່າໄມ້ ຂອງບ້ານ ລວມມີ 4 ບ້ານເປົ້າໝາຍຈຳນວນ 224 ຄອບຄົວ ພົນລະເມືອງທັງໝົດມີ 896 ຄົນ, ຍິງ 531 ຄົນ, ຢູ່ເມືອງວຽງໄຊ ໃນໄລຍະ 2 ປີ, ຫຼັງຈາກນັ້ນ ປະຊາຊົນຍັງສືບຕໍ່ປະຕິບັດຈົນເຖິງປະຈຸບັນ.*





## ການຈັດຕັ້ງປະຕິບັດ:

- ບ້ານ ຊຽງລວງ, ສ້າງແລວປ້ອງກັນໄຟກ້ວາງ 4-5 ແມັດ ໄດ້ 4 ບ່ອນ, ແຕ່ລະບ່ອນມີຄວາມຍາວ 6-10 ແມັດ, ມີຄວາມຍາວລວມທັງໝົດ 30 ແມັດ.
- ບ້ານ ນາເມືອງ, ສ້າງແລວປ້ອງກັນໄຟກ້ວາງ 4-5 ແມັດ ໄດ້ 2 ບ່ອນ ມີຄວາມຍາວລວມທັງໝົດ 14 ແມັດ.
- ບ້ານ ຊຽງຊື້, ສ້າງແລວປ້ອງກັນໄຟກ້ວາງ 4-5 ແມັດ ໄດ້ 2 ບ່ອນ, ແຕ່ລະບ່ອນມີຄວາມຍາວ 10-15 ແມັດ, ມີຄວາມຍາວລວມທັງໝົດ 30 ແມັດ.
- ບ້ານ ໂພນໄຊ, ສ້າງແລວປ້ອງກັນໄຟກ້ວາງ 4-5 ແມັດ ໄດ້ 6 ບ່ອນ, ແຕ່ລະບ່ອນມີຄວາມຍາວ 7-15 ແມັດ, ມີຄວາມຍາວລວມທັງໝົດ 80 ແມັດ.
- ສ້າງແລວປ້ອງກັນໄຟໄດ້ທັງໝົດ 14 ບ່ອນ ຄວາມຍາວທັງໝົດ, ຄວາມຍາວທັງໝົດ 154 ແມັດ.



## ຜົນໄດ້ຮັບ:

- ສາມາດຄຸ້ມຄອງໄຟໄໝ້ລາມປ່າໃນ 4 ບ້ານເປົ້າໝາຍໃນແຕ່ລະປີ ໄດ້ 100%.
- ເຮັດໃຫ້ຊີວະນາໆພັນເຄື່ອງປ່າຂອງດົງໃນປ່າມີປະລິມານເພີ່ມຂຶ້ນຫລາຍກວ່າເກົ່າ.
- ສາມາດປົກປັກຮັກສາແຫຼ່ງນໍ້າ (ນໍ້າລິນ, ນໍ້າເພື່ອເຮັດນາ)ໃຫ້ແກ່ບ້ານທຸກລະດູການຖ້າທຽບໃສ່ໃນເມື່ອກ່ອນ.
- ພືດພັນທີ່ເປັນອາຫານໃຫ້ແກ່ປະຊາຊົນມີຫລາຍຂຶ້ນ.

## ໂອກາດ:

- ສາມາດນຳໃຊ້ຮູບແບບວິທີການນີ້ໄປນຳໃຊ້ໃຫ້ແກ່ບ້ານອື່ນໆ.
- ເປັນບ້ານແບບຢ່າງ, ບ້ານຕົວແບບໃຫ້ແກ່ບ້ານອື່ນມາຖອດຖອນແລກປ່ຽນບົດຮຽນ.
- ປູກຈິດສຳນຶກໃຫ້ແກ່ຄົນລຸ້ນຫລັງ.
- ເປັນພູມປັນຍາທ້ອງຖິ່ນ, ມູນມໍລະດົກໃນການຮັກສາສິ່ງແວດສືບຖອດໃຫ້ລູກຫລານລຸ້ນຕໍ່ໄປ.



Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC